ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ 7730 /PCD

ນະຄອນຫລວງວຽງຈັນ, ວັນທີ 07 OCT 2019

ໃບລາຍງານ

ອີງຕາມ: ບົດບັນທຶກກອງປະຊຸມແກ້ໄຂຂໍ້ຄົງຄ້າງການກວດສອບ ບັນຊີ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຄັ້ງວັນທີ 27 ກັນຍາ 2019.

ຂ້າພະເຈົ້າໃນນາມ ຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ມີຄວາມຍິນດີ ຂໍແຈ້ງໃຫ້ທ່ານຊາບວ່າ ບັນຫາຕ່າງໆທີ່ຜ່ານມາລະຫວ່າງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກັບ ບໍລິສັດ ກວດສອບບັນຊີ PWC ທີ່ເຮັດໃຫ້ບໍ່ສາມາດອອກບົດລາຍງານການທົບທວນຄືນບັນຊີຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ 6 ເດືອນຕົ້ນປີ 2018 ແລະ ບໍ່ສາມາດດຳເນີນການກວດສອບປະຈຳປີ 2018 ນັ້ນ ເປັນເຫດໃຫ້ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ບໍ່ສາມາດ ດຳເນີນການເປີດເຜີຍບົດລາຍງານ ການເຄື່ອນໄຫວທຸລະກິດປະຈຳ 6 ເດືອນຕົ້ນປີ 2018 ແລະ ປະຈຳປີ 2018, ປະຈຳງວດ 1, 2019 ແລະ ປະຈຳ 6 ເດືອນຕົ້ນປີ 2019.

ປະຈຸບັນບັນຫາດັ່ງກ່າວໄດ້ຖືກແກ້ໄຂ ແລະ ບໍລິສັດ ກວດສອບບັນຊີ PWC ພ້ອມຈະລົງກວດສອບ ຕາມແຜນການກວດສອບ ຈະເລີ່ມແຕ່ວັນທີ 7 ຕຸລາ 2019 ເຖິງ ວັນທີ 8 ພະຈິກ 2019 ແລະ ຈະອອກຮ່າງບົດ ລາຍງານງົບການເງິນ ປະຈຳປີ 2018.

ດັ່ງນັ້ນ, ການກະກຽມຈັດກອງປະຊຸມຜູ້ຖືຮຸ້ນ ແລະ ເປີດເຜີຍ ບົດລາຍງານການເຄື່ອນໄຫວທຸລະກິດ ປະຈຳ 6 ເດືອນຕົ້ນປີ 2018, ປະຈຳປີ 2018 ພ້ອມກັນ ພາຍໃນທ້າຍເດືອນ ກຸມພາ 2020.

ດັ່ງນັ້ນມ ຈຶ່ງລາຍງານມາເພື່ອຊາບ.

ຜູ້ອຳນວຍການໃຫຍ່
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ
Phousy Construction and Development Public Company

ສີທາ ພົມມະຈິດ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 6, ໂຮງແຮມວຽງຈັນ ພລາຊາ, ບ້ານຫັດສະດີ, ເມືອງຈັນທະບູລີ, ນະຄອນຫລວງ ຈັນ.Tel/Fax: (856-21)265394; E-mail: info@pcdlao.com ; website: www.pcdlao.com